# ຂ່າວໃບລານ

ໂຄງການປົກປັກຮັກສາໜັງສືໃບລານລາວ ການຮ່ວມມືລາວ-ເຢຍຣະມັນ ປີທີ III ສະບັບທີ 7* ກໍລະກົດ 1995
PRESERVATION OF LAO MANUSCRIPTS PROGRAMME LAO-GERMAN COOPERATION



## ໂຄງການປົກປັກຮັກສາໜັງສືໃບລານລາວ ປະສົບຜົນສຳເລັດລະດັບໂລກ



**ໂຄງການປົກປັກຮັກສາໜັງສືໃບລານລາວ** ເປັນໂຄງການຮ່ວມມືໄລຍະຍາວ ແຕ່ ໗ ຫາ໑໐ ປີ (໑໙໙໓-໒໐໐໒) ລະຫວ່າງລັດຖະບານລາວ ແລະ ລັດຖະບານ ສ.ສ. ເຢຍຣະມັນ ມາຮອດປັດຈຸບັນໄດ້ດຳເນີນມາເປັນປີທີ ໓.

ຕະຫລອດໄລຍະດຳເນີນງານ ໂຄງການປະສົບຜົນສຳເລັດໃນຫລາຍໆດ້ານ ຄື : ສາມາດປົກປັກຮັກສາໜັງສືໃບລານໄດ້ ໙໓.໒໕໐ ຜູກ ໃນ ໑໗໒ ວັດ ຢູ່ກຳແພງນະຄອນວຽງຈັນ, ແຂວງວຽງຈັນ, ຫລວງພະບາງ, ໄຊຍະບູລີ, ອຸດົມໄຊ ແລະ ຖ່າຍໄມໂຄຼຟິມໄດ້ ໒.໕໗໓ ຜູກ.

ໄປພ້ອມໆກັບນັ້ນ ໂຄງການ ໄດ້ມີການປຸກລະດົມ, ໂຄສະນາເຜີຍແຜ່, ຈັດຕັ້ງການສຳມະນາ ແລກປ່ຽນໂອ້ລົມກັບມວນຊົນ, ເຊິ່ງໄດ້ດຶງດູດຄວາມສົນໃຈຂອງມວນຊົນທຸກຂັ້ນໃຫ້ມີສ່ວນຮ່ວມ ແລະ ເປັນເຈົ້າການໃນການປົກປັກຮັກສາວັດທະນະທຳຂອງຕົນເອງ, ຊຸກຍູ້ການສຶກສາສົງເຊັ່ນ : ຢູ່ສູນກາງ, ຫລວງພະບາງ, ໄຊຍະບູລີ.

ໄດ້ມີການເຕົ້າໂຮມນັກຄົ້ນຄວ້າທັງອາວຸໂສ ແລະ ໜຸ່ມນ້ອຍ ເພື່ອມາແລກປ່ຽນຄວາມຄິດຄວາມເຫັນ ເພື່ອຈະເລືອກເຟັ້ນໜັງສືບູຮານຕ່າງໆ ອອກມາພິມເຜີຍແຜ່.

ຕະຫລອດການເຄື່ອນໄຫວ ໂຄງການປົກປັກຮັກສາໜັງສືໃບລານ ໄດ້ມີບົດບາດຕໍ່ການອະນຸລັກ, ຟື້ນຟູ ແລະ ສົ່ງເສີມມໍລະດົກຂອງຊາດກໍ່ຄືວັດທະນະທຳລາວຢ່າງແທ້ຈິງ ຈຶ່ງເຮັດໃຫ້ໂຄງການເປັນທີ່ສົນໃຈຂອງທຸກຄົນທັງພາຍໃນ ແລະ ຕ່າງປະເທດ.

ໃນເດືອນທັນວາ ໑໙໙໒ ຄະນະກຳມາທິການແຫ່ງປະເທດເຢຍຣະມັນເພື່ອອົງການຢູແນສໂກ ໄດ້ສະເໜີໂຄງການປົກປັກຮັກສາໜັງສືໃບລານໄປທີ່ປາຣີ ປະເທດຝະລັ່ງ ເພື່ອໃຫ້ຮັບຮອງເອົາເປັນໂຄງການປະຈຳທົດສະວັດໂລກ ເພື່ອການພັດທະນາວັດທະນະທຳ ຂອງອົງການຢູແນສໂກ ໃນວັນທີ ໑໐ ພຶດສະພາ ໑໙໙໕ ຜູ້ປະສານງານຂອງອົງການອຸຍແນສໂກທີ່ກຸງປາຣີ ປະເທດຝະລັ່ງ ໄດ້ແຈ້ງຂ່າວມາຍັງຄະນະກຳມາທິການແຫ່ງຊາດລາວ ເພື່ອອົງການອຸຍແນສໂກ ວ່າ **ໂຄງການປົກປັກຮັກສາໜັງສື ໃບລານລາວ ໄດ້ຖືກຮັບຮອງເອົາເປັນ ໜຶ່ງໃນການເຄື່ອນໄຫວທົດສະວັດໂລກ ເພື່ອການພັດທະນາວັດທະນະທຳ ຂອງອົງການອຸຍແນສໂກ.**

ສິ່ງດັ່ງກ່າວນີ້ ຈະຊຸກຍູ້ໃຫ້ປະຊາຊົນຜູ້ຮັກຫອມວັດທະນະທຳ ມີກຳລັງໃຈອົ້ນຕື່ມ ໃນການປົກປັກຮັກສາມໍລະດົກຂອງຊາດຕົນ.

# ສຳມະນາໃບລານ....ໄຊຍະບູລີ

ລານກ້ອມ

ຄະນະໂຄງການຄະນະໃຫຍ່ ໄດ້ເດີນທາງໄປທີ່ແຂວງໄຊຍະບູລີອີກຄັ້ງຫນຶ່ງ ທີ່ປະຫວັດສາດ ແຂວງໄຊຍະບູລີ ຈະບັນທຶກໄວ້ຕະລອດການ...ເພື່ອເຜີຍແຜ່ມໍລະດົກ ທາງດ້ານ ພູມປັນຍາຂອງບັນພະບູລຸດລາວ ສ້າງທັດສະນະຄວາມເຂົ້າໃຈ ຄວາມຮັບຮູ້ກ່ຽວກັບເອກະສານບູຮານ ຄືການປົກປັກຮັກສາ ແລະ ການ ຄົ້ນຄວ້າ.

ໃນວັນທີ 29-31 ມີນາ 1995 ພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງໄຊຍະບູລີ ສົມທົບຄະນະໂຄງການ ໄດ້ເປີດກອງປະຊຸມສຳມະນາວຽກງານ "ປົກປັກຮັກສາຫນັງສືໃບລານລາວ" ຢູ່ທີ່ຫ້ອງປະຊຸມໂຄສະນາອົບຮົມແຂວງ ພາຍໃຕ້ການເປັນ ປະທານຂອງທ່ານ ທອງບັນ ແສງອຳພອນ ຮອງເຈົ້າແຂວງໆ ໄຊຍະບູລີ ເປັນກຽດເຂົ້າຮ່ວມ ໃນກອງປະຊຸມມີ ທ່ານ ບົວບານ ວໍລະຂຸນ ຮອງລັດຖະມົນຕີ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ, ນາງ ດາລາ ກັບລະຍາ ຮອງຫົວຫນ້າກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ ຫົວຫນ້າໂຄງການປົກປັກຮັກສາຫນັງສືໃບລານລາວ, ທ່ານ ນາງ ແສ້ງເກ ຄອສເນ ທູດວັດທະນະທຳ ແຫ່ງ ສ.ສ. ເຢຍຣະມັນ ເທາງຫນ້າສະຖານທູດເຢຍຣະມັນ ປະຈຳລາວ, ທ່ານສາສະດາຈານ ດຣ. ຮາຣັນ ຮຸນດິອຸສ ຊ່ຽວຊານດ້ານຄຳພີໃບລານ ຈາກ ສ.ສ.ເຢຍຣະມັນ, ບັນດານັກວິຊາການ, ນັກຄົ້ນຄວ້າ, ພະສົງ ສາມະເນນ, ຜູ້ຊົງຄຸນວຸດທິ, ເຖົ້າແກ່ແນວໂຮມ, ພະແນກການອ້ອມຂ້າງແຂວງ, ບັນດາສຳມະນາກອນມາຈາກ 9 ຕົວເມືອງ ຮວມທັງຫມົດ 50 ກວ່າຄົນ.



ຈຸດປະສົງຂອງກອງປະຊຸມສຳມະນາຄັ້ງນີ້ ເພື່ອສະເຫນີສະພາບຂອງຫນັງສືໃບລານໃນລາວ ປຸກລະດົມ ສະຕິຕື່ນຕົວຂອງບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງຕະຫລອດເຖິງພະສົງ ສາມະເນນ ແລະ ຊາວບ້ານ, ແນະນຳວິທີວິທະຍາ, ວິຊາການໃນການສຳຫລວດ ແລະ ປົກປັກຮັກສາຫນັງສືໃບລານໃຫ້ແກ່ພະນັກງານທີ່ກ່ຽວຂ້ອງ, ຈັດຕັ້ງຈຸປະຕິບັດງານສຳຫລວດທີ່ປະກອບດ້ວຍ ພະນັກງານ ຂອງແຂວງສົມທົບກັບຄະນະໂຄງການ ຈາກສູນກາງເພື່ອເຮັດຫນ້າທີ່ສຳຫລວດ ແລະ ປົກປັກຮັກສາຫນັງສືໃບລານພາຍໃນແຂວງ.

ໃນ 3 ມື້ ຂອງການດຳເນີນກອງປະຊຸມ ໄດ້ມີການຄົ້ນຄວ້າແລກປ່ຽນຄວາມຄິດຄວາມເຫັນໃນຫລາຍບັນຫາ ເປັນຕົ້ນວ່າ : ການປະລິວັດ ແລະ ພິມເຜີຍແຜ່ເອກະສານບູຮານ ທີ່ສຳຄັນ ແລະ ມີຄຸນປະໂຫຍດຕໍ່ສັງຄົມ , ການຄົ້ນຄວ້າວັນນະຄະດີບູຮານ, ກົດຫມາຍບູຮານ, ອັກສອນສາດ, ວຽກງານສົ່ງເສີມການສຶກສາຮ່ຳ ແລະ ພັດທະນາຄວາມຮູ້ກ່ຽວກັບຫນັງສືໃບລານໃຫ້ແກ່ຄົນຮຸ່ນໃຫມ່ ໃນໂອກາດນີ້ ຜູ້ຕາງຫນ້າ ຈາກແຕ່ລະພະແນກການ, ຫ້ອງການວັດທະນະທຳແຕ່ລະເມືອງ ຍັງໄດ້ພັດປ່ຽນກັນຂຶ້ນລາຍ

→

ງານສະພາບການປົກປັກຮັກສາໜັງສືໃບລານຢູ່ໃນທ້ອງຖິ່ນຂອງຕົນ ພ້ອມທັງສະເໜີຄຳຄິດຄຳເຫັນ ເຊິ່ງແຕ່ລະຄົນໄດ້ສະແດງຄວາມຍິນດີ ຕໍ່ທິດທາງ ແລະ ແຜນການຂອງໂຄງການ ກໍ່ຄືຂອງລັດຖະບານ ທີ່ມີແນວທາງນະໂຍບາຍ ໃນການອະນຸລັກມໍລະດົກທາງວັດທະນະທຳ. ຍ້ອນວ່າສະພາບທົ່ວໄປຂອງໜັງສືໃບລານທີ່ມີຢູ່ ຍັງບໍ່ໄດ້ມີການປົກປັກຮັກສາເທົ່າທີ່ຄວນ ຜ່ານມາກໍ່ມີການຕົກເຮ່ຍເສຍຫາຍໄປຢ່າງຫລວງຫລາຍ ຍ້ອນສາເຫດຫລາຍປະການ.



⁜ ທ່ານ ຄຳແສງດາວ ປະທຳມະວົງ ຄະນະໂຄງການ ພວມແນະນຳ ວິທີອະນາໄມໜັງສືໃບລານ ໃຫ້ແກ່ສຳມະນາກອນ

ໃນວັນທີ 30 ມີນາ ກອງປະຊຸມໄດ້ລົງເລິກທາງດ້ານວິຊາການ ໃນນີ້ສຳມະນາກອນ ໄດ້ຮັບຟັງການແນະນຳວິທີວິທະຍາໃນການບັນທຶກຂໍ້ມູນ, ຈັດແຍກໝວດໝູ່ຕະຫລອດຮອດການອະນາໄມ, ມັດ, ຫໍ່ ແລະ ຈັດມ້ຽນ ຈາກນັ້ນຈຶ່ງໄດ້ເຮັດທົດລອງແຕ່ລະຂັ້ນຕອນໃນການສຳຫລວດ ເພື່ອ ຄວາມຮັບຮູ້ ແລະ ເຂົ້າໃຈ ສາມາດນຳໃຊ້ວິຊາການດັ່ງກ່າວ ເຂົ້າໃນການປົກປັກຮັກສາໜັງສືໃບລານ ໃນທ້ອງຖິ່ນຂອງຕົນ.

ຕອນບ່າຍຂອງວັນທີ 31 ມີນາ ກອງປະຊຸມໄດ້ເປັນເອກະພາບກັນສະຫລຸບຕີລາຄາໝາກຜົນທີ່ໄດ້ຮັບຈາກກອງປະຊຸມສຳມະນາຄັ້ງນີ້ ທ່ານ ບົວບານ ວໍລະຂຸນ ຮອງລັດຖະມົນຕີ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ໄດ້ກ່າວສະຫລຸບໂດຍສັງເຂບ ວ່າ : **ກອງປະຊຸມສຳມະນາຄັ້ງນີ້ ມີຄວາມສຳຄັນເປັນຢ່າງຍິ່ງຕໍ່ການປຸກສະຕິຕື່ນຕົວ ບໍ່ສະເພາະແຕ່ການອະນຸລັກໜັງສືໃບລານ ເທົ່ານັ້ນ ແຕ່ນັບລວມທັງວັດທະນະທຳຂອງຊາດ ເຫັນໄດ້ນະໂຍບາຍອັນຖືກຕ້ອງຂອງລັດຖະບານ ສ.ປ.ປ. ລາວ ຕໍ່ກັບການປົກປັກຮັກສາມູນເຊື້ອທີ່ເປັນເອກະລັກຂອງຊາດເຮົາ** ເປັນການຕອບສະໜອງ ຕໍ່ຄວາມມຸ່ງມາດປາດຖະໜາຂອງປະຊາຊົນບັນດາເຜົ່າ ເປັນສັນຍະລັກແຫ່ງການຟື້ນຟູ, ບູລະນະ ແລະ ປົກປັກຮັກສາວັດທະນະທຳ.

ຜົນຈາກກອງປະຊຸມສຳມະນາຄັ້ງນີ້ ຍັງອຳນວຍໃຫ້ພະແນກການທີ່ກ່ຽວຂ້ອງພາຍໃນແຂວງ ໄດ້ເຂົ້າໃຈ ແລະ ຮັບຮູ້ກ່ຽວກັບພາລະກິດ ໃນການປົກປັກຮັກສາໜັງສືໃບລານ , ເປີດໂອກາດໃຫ້ແຕ່ລະພາກສ່ວນໄດ້ແລກປ່ຽນຄວາມຄິດເຫັນ ເພື່ອຈະຮ່ວມກັນໃນການປະຕິບັດ ວຽກງານປົກປັກຮັກສາໜັງສືໃບລານ ລົງສູ່ແຕ່ລະທ້ອງຖິ່ນຂອງຕົນ.

**ເຊີນອ່ານ**

- ຄວາມຊົງຈຳ ຈາກອະດີດ
- ສັງຮອມ ການເຄື່ອນໄຫວ

# " ເພື່ອການອະນຸລັກ"

*( ຄັດຈາກ ບົດປາຖະກະຖານໍາ ຂອງທ່ານ ບົວບານ ວໍລະຂຸນ ຕໍ່ກອງປະຊຸມ ສໍາມະນາປົກປັກຮັກສາໜັງສືໃບລານ ແຂວງໄຊຍະບູລີ 29-31 ມີນາ 1995 ).*



ກ່ອນອື່ນ ຂ້າພະເຈົ້າ ຂໍຕາງໜ້າໃຫ້ກະຊວງຖະແຫລງຂ່າວ ແລະ ວັດທະນະທໍາ ຂໍສະແດງຄວາມຍິນດີ ແລະ ຊົມເຊີຍຕໍ່ກອງປະຊຸມສໍາມະນາ ປົກປັກຮັກສາໜັງສືໃບລານຄັ້ງນີ້ ທີ່ມີຂຶ້ນໄດ້ດ້ວຍຄວາມພະຍາຍາມ ຂອງຄະນະຮັບຜິດຊອບທຸກຂັ້ນ.

ໄປຄຽງຄູ່ກັບວຽກງານ ດ້ານອື່ນໆ ລັດຖະບານເຮົາກໍໄດ້ວາງແນວທາງນະໂຍບາຍກ່ຽວກັບການປົກປັກຮັກສາ ແລະ ສົ່ງເສີມວັດທະນະທໍາທີ່ມີຫລາຍສີສັນຂອງຊາດສົມທົບກັບການຮັບເອົາສິ່ງຍອດຍິ່ງ ຈາກວັດທະນະທໍາຂອງມວນມະນຸດ ຢ່າງມີການເລືອກເຟັ້ນ. ທາງດ້ານວຽກງານກ່ຽວກັບໜັງສືໃບລານກໍໄດ້ມີການຄົ້ນຄວ້າຟື້ນຟູ ແລະ ປົກປັກຮັກສາ. ຫລາຍເລື່ອງກໍໄດ້ມີການພິມແຜ່ ໂດຍຂຽນເປັນໂຕໜັງສືລາວສະໄໝປັດຈຸບັນ ແຕ່ກໍຍັງບໍ່ທັນກວ້າງຂວາງ ແລະ ແຂງແຮງເທື່ອ... ດັ່ງນັ້ນ, ໂດຍໄດ້ຮັບການຮ່ວມມື ແລະ ຊ່ວຍເຫລືອຈາກລັດຖະບານ ແຫ່ງສະຫະພັນສາທາລະນະລັດເຢຍຣະມັນ ໂຄງການປົກປັກຮັກສາໜັງສືໃບລານ ຈຶ່ງໄດ້ຮັບການສ້າງຕັ້ງຂຶ້ນ. ກະຊວງຖະແຫລງຂ່າວ ແລະ ວັດທະນະທໍາ ໄດ້ມອບຄວາມໄວ້ວາງໃຈ ໃຫ້ແກ່ກົມວັນນະຄະດີ ແລະ ວັດທະນະທໍາມະຫາຊົນ ພ້ອມດ້ວຍຊ່ຽວຊານດ້ານຄໍາພີໃບລານ ຈາກປະເທດເຢຍຣະມັນ ເປັນຜູ້ເຄື່ອນໄຫວປະຕິບັດຕາມຂໍ້ຕົກລົງ ສັນຍາຂອງທັງສອງຝ່າຍ ລັດຖະບານລາວ ແລະ ເຢຍຣະມັນ. ຜ່ານການປະຕິບັດວຽກງານ ໃນຫລາຍແຂວງ ນັບແຕ່ປີ 1993 ເປັນຕົ້ນມາກໍໄດ້ປະສົບຜົນສໍາເລັດເປັນທີ່ໜ້າເພິ່ງພໍໃຈ ແລະ ຫວັງວ່າຜົນງານດັ່ງກ່າວຈະກາຍເປັນແມ່ແຮງອັນສໍາຄັນ ເພື່ອຊຸກດັນໃຫ້ແກ່ການເຄື່ອນໄຫວຂອງໂຄງການໃນແຂວງໄຊຍະບູລີນີ້ໃຫ້ໄດ້ຮັບໝາກຜົນອັນໃໝ່ທີ່ຍິ່ງໃຫຍ່ກວ່າເກົ່າ.

ເມື່ອກ່ອນ ການປົກປັກຮັກສາໜັງສືໃບລານ, ໜັງສືທໍາຄໍາສັ່ງສອນຕ່າງໆ ຖືເປັນໜ້າທີ່ຂອງພະສົງອົງຄະເຈົ້າ ແລະ ພຸດທະສາສະນິກະຊົນທັງຫລາຍ ເຊິ່ງໄດ້ປະຕິບັດ ສືບທອດກັນມາຫລາຍເຊັ່ນຄົນ. ແຕ່ເນື່ອງຈາກວ່າບາງຍຸກສະໄໝ ສະພາບການບ້ານເມືອງ ຕົກຢູ່ໃນສະພາວະສົງຄາມ, ປະສົບໄພທໍາມະຊາດ ເຮັດໃຫ້ໜັງສືໃບລານຖືກໄຟໄໝ້, ປວກກັດ, ມອດເຈາະ, ຝົນຮົ່ວອື່ນ... ເຮັດໃຫ້ໜັງສືໃບລານຕົກເຮ່ຍເສຍຫາຍໄປນັບບໍ່ຖ້ວນ. ແຕ່ຍ້ອນຄວາມເປັນຫ່ວງໄຍ ແລະ ເຫັນໄດ້ຄວາມສໍາຄັນ ເມື່ອຍາມມີເງື່ອນໄຂດີ ແລະ ເໝາະສົມ ພະສົງ ແລະ ຍາດໂຍມກໍໄດ້ສ້າງຈານໜັງສືຕ່າງໆນັ້ນໄວ້ຄືນໃໝ່ ແລະ ນໍາໃຊ້ໃບລານ ເປັນປະເພນີສືບທອດກັນມາຈົນເຖິງທຸກວັນນີ້.

ວຽກງານປົກປັກຮັກສາໜັງສືໃບລານ ອັນເປັນມໍລະດົກສໍາຄັນມີຄຸນຄ່າ ແລະ ທາຍາກຂອງຊາດເຮົານີ້ເປັນວຽກງານທີ່ສໍາຄັນ ທີ່ພວກເຮົາທຸກຄົນຄວນຈະພ້ອມກັນປະຕິບັດ ເພື່ອໃຫ້ຍືນຍົງຄົງນານຄູ່ກັບຊາດລາວເຮົາຕະຫລອດໄປ.

✪ ✪ ✪

---

## ຜະຫຍາພາສິດ

- ເກັບກໍາໂດຍ : *ບຸນຍົກ ແສນສູນທອນ*
- ຖອດຈາກໃບລານກ້ອມ ທີ່ແຕກມັດແຕກຜູກ *ຈາກວັດໃໝ່, ວັດຈອມທອງ, ວັດແສນ, ວັດສີລີ, ປາກຄານ ( ຫລວງພະບາງ )*

ຢ່າໄດ້ຕີໂຕດຫ້ອງ<br>
ປວງໝູ່ໝູ່ໝາ<br>
ມັນບໍ່ເຫັນຂອງກິນ<br>
ບໍ່ແລ່ນວົນວຽນອ້ອມ<br>
ຕີແຕ່ແມງມີຮ້າຍ<br>
ກິນສົ້ນບໍ່ຮ່ໍາເຜີງ<br>
ຕີແຕ່ເປັດໄກ່ຕີ້<br>
ເຕັ້ນຕອດຕໍ່າຂາ<br>
ມັນຫາກເຫັນຂອງກິນ<br>
ຈິ່ງແລ່ນວົນວຽນອ້ອມ<br>
ຕີແຕ່ງົວຄວາຍໝົ້ນ<br>
ຮຽວໜາມຮົ້ວໄຮ່<br>
ມັນຫາກເຫັນບ່ອນໄດ້<br>
ຈິ່ງຫຽວໝົ້ນຢູ່ຄົນ<br>
ຕີແຕ່ຄົນເຂົ້າຮ້າຍ<br>
ພາຍໂຕບໍ່ເຖື່ອງຕໍ່<br>
ຕີແຕ່ຄໍ່ຍິ່ງເຜົ້າ<br>
ຄໍເຈົ້າຜັດແຫ່ງຈົນ

# ລົງສາງທາງປັນຍາ

*( ຄັດຈາກ ບົດປາໄສ ຂອງ ທ.ທອງບັນ ແສງອາພອນ ຮອງເຈົ້າແຂວງໄຊຍະບູລີ ໃນກອງປະຊຸມວິຊາການ ວຽກງານການປົກປັກຮັກສາຫນັງສື ຜູກໃບລານ ທີ່ແຂວງໄຊຍະບູລີ ຄັ້ງວັນທີ 29-31 ມີນາ 1995 ).*



ກອງປະຊຸມສຳມະນາຄັ້ງນີ້ ມີຄວາມຫມາຍສຳຄັນຍິ່ງ ເພາະມັນເປັນການຈັດຕັ້ງປະຕິບັດມະຕິ ກ່ຽວກັບວຽກງານວັດທະນະທຳໃນໄລຍະໃຫມ່, ເປັນຕົ້ນແມ່ນຫນ້າທີ່ວຽກງານຈຳນວນຫນຶ່ງຂອງການສ້າງ ແລະ ເສີມຂະຫຍາຍມໍລະດົກທາງດ້ານວັດທະນະທຳ ໃນນັ້ນແມ່ນໃສ່ການປົກປັກຮັກສາຟື້ນຟູບູລະນະພັດທະນາ ແລະ ນຳໃຊ້ຄຸນຄ່າຂອງມໍລະດົກວັດທະນະທຳຢ່າງສົມເຫດສົມຜົນ. ກອງປະຊຸມສຳມະນາຄັ້ງນີ້ ນອກຈາກໄດ້ຄວາມຮູ້ກ່ຽວກັບ ຫນັງສືໃບລານ ມໍລະດົກດ້ານພູມປັນຍາຂອງບັນພະບຸລຸດລາວແລ້ວ ຍັງຈະສ້າງເງື່ອນໄຂສະດວກ ໃຫ້ແກ່ການຊີ້ນຳນຳພາໃນການສຳຫລວດ ແລະ ປົກປັກຮັກສາຫນັງສືຜູກໃບລານອີກ.

ພວກເຮົາໄດ້ຮັບຮູ້ນຳກັນແລ້ວ ຊາດລາວເຮົາແມ່ນຊາດທີ່ມີອະລິຍະທຳ ແລະ ມີວັດທະນະທຳອັນດີງາມ ມາຕັ້ງແຕ່ດົນນານ ຊົນເຜົ່າຕ່າງໆຂອງລາວລ້ວນແຕ່ມີຂະນົບທຳນຽມປະເພນີ ແລະ ມູນເຊື້ອວັດທະນະທຳທີ່ເປັນເອກະລັກຂອງຕົນ ຊຶ່ງໂຮມເຂົ້າເປັນວັດທະນະທຳຂອງວົງຄະນາຍາດແຫ່ງຊາດ ມັນແມ່ນມໍລະດົກອັນລ້ຳຄ່າ, ເປັນພື້ນຖານດ້ານຈິດໃຈ ຂອງສັງຄົມ ແລະ ເປັນປັດໃຈສຳຄັນ ຂອງການຍືນຍົງລົງຕົວຂອງຊາດ ອັນນີ້ມັນແມ່ນຄຸນຄ່າ ແລະ ຄວາມສຳຄັນຂອງວັດທະນະທຳ. ໃນຂະບວນວິວັດຂອງປະຫວັດສາດຊາດລາວເຮົາ ວັດທະນະທຳທີ່ມີລັກສະນະຊາດ, ມະຫາຊົນ ແລະ ກ້າວຫນ້າໄດ້ຮັບການສ້າງຂື້ນ ແລະ ເສີມຂະຫຍາຍມາຕະຫລອດ ຊຶ່ງພວກເຮົາ ເຫັນໄດ້ຈາກຫນັງສືຜູກໃບລານ ບາງຈະບົດມີອາຍຸເປັນຫລາຍຮ້ອຍປີ ການຂີດຂຽນມີເນື້ອໃນເລິກເຊິ່ງເຫມາະສົມກັບລະດັບ ຄວາມຮັບຮູ້ຂອງປະຊາຊົນຄົນໃນເມື່ອກ່ອນ ສ່ອງແສງໃຫ້ເຫັນຄວາມປີຊາສາມາດ ຂອງປະຊາຊົນລາວເຮົາ ໃນແຕ່ລະຍຸກ ແຕ່ລະສະໄຫມ ທັງປະກອບເປັນຮູບພາບໃຫ້ຄົນໄດ້ເບິ່ງໄດ້ເຫັນບາງເລື່ອງ ກໍສະແດງເຖິງຄວາມດີ,ຄວາມຮ້າຍ, ເລື່ອງການເມືອງ, ເລື່ອງສົງຄາມ ການຕໍ່ສູ້ລະຫວ່າງສັດຈະທຳ ແລະ ອະທຳ ຕະຫລອດເຖິງຕຳລາຢາພື້ນເມືອງ ອັນເປັນປະໂຫຍດໃຫ້ແກ່ສັງຄົມ ຢ່າງຫລວງຫລາຍ.

ແຂວງໄຊຍະບູລີ ກໍຄືແຂວງອື່ນໆໃນທົ່ວປະເທດ ທີ່ມີມູນມໍລະດົກທາງດ້ານພູມປັນຍາ, ແຕ່ກ່ອນຫນ້ານີ້ພວກເຮົາກໍບໍ່ໄດ້ເອົາໃຈໃສ່ໃນການສຳຫລວດກວດກາຫ້ອນໂຮມ, ເກັບມ້ຽນຫນັງສືຜູກໃບລານ ແລະ ກໍບໍ່ຮູ້ວ່າຫນັງສືຜູກໃບລານທີ່ມີຢູ່ແຕ່ລະວັດນັ້ນມັນມີຈຳນວນເທົ່າໃດ, ມີຈັກເລື່ອງ, ການມ້ຽນມັດກໍບໍ່ທັນດີ ແລະ ມີຫນ້ອຍຄົນທີ່ສຸດທີ່ຮູ້ເຖິງຄວາມສຳຄັນ ຄຸນປະໂຫຍດຂອງມັນ ແລະ ກໍມີຫນ້ອຍຄົນຈະເອົາອອກມານຳໃຊ້ໃຫ້ເປັນປະໂຫຍດແກ່ສັງຄົມ ບາງຢ່າງກໍຖືກຕົກເຮ່ຍເສຍຫາຍໄປ. ເຖິງວ່າພວກເຮົາໄດ້ມີການທັບລົງກໍ່ສ້າງຮາກຖານ ພັດທະນາຊົນນະບົດ ແຕ່ລະຂະແຫນງການກໍໄດ້ຂຶ້ນໂຄງການວຽກງານຂອງຕົນ ແຕ່ເຫັນວ່າ ການຂຶ້ນໂຄງການຂອງຂະແຫນງວັດທະນະທຳ ກໍ່ບໍ່ໄດ້ລົງເລິກໃນການປົກປັກຮັກສາຫນັງສືຜູກໃບລານ ຊຶ່ງເປັນມູນມໍລະດົກອັນລ້ຳຄ່າ ທີ່ບັນພະບູລຸດໄດ້ຝາກຝັງໃຫ້ແກ່ພວກເຮົາ ໃນການສືບທອດຕໍ່ໄປ. ພາຍຫລັງໂຄງການສຳຫລວດ ປົກປັກຮັກສາຫນັງສືຜູກໃບລານໄດ້ຈັດຕັ້ງປະຕິບັດ ຢູ່ແຂວງໄຊຍະບູລີ ຫລາຍຄົນກໍມີຄວາມສົນໃຈ ແລະ ປະກອບສ່ວນທາງດ້ານວັດຖຸ ແລະ ເຫື່ອແຮງຊ່ວຍຄະນະດັ່ງກ່າວ ໃນການມ້ຽນມັດ, ເຊັດຖູ ເຮັດໃຫ້ຫນັງສືຜູກໃບລານໄດ້ຮັບການຂຶ້ນທະບຽນ ແລະ ເກັບມ້ຽນໄວ້ເປັນຢ່າງດີ.





# ຄຸນຄ່າແຫ່ງການຮ່ວມມື

*(ຄັດຈາກບົດປະກອບຄຳເຫັນຂອງທ່ານ ນາງແອັງເກ ຄອສເນ ທູດວັດທະນະທຳ ແຫ່ງ ສ.ສ.ເຢຍ ລະມັນ ປະຈຳລາວ ໃນກອງປະຊຸມ ສຳມະນາ ການປົກປັກຮັກສາ ໜັງສືໃບລານ ທີ່ແຂວງໄຊຍະບູລີ ວັນທີ 29-31/ມີນາ 1995 )*

ນັບວ່າໂຄງການນີ້ ເປັນໂຄງການໃຫຍ່ ແລະ ສຳຄັນ ໃນຂົງເຂດວຽກງານວັດທະນະທຳທີ່ລັດຖະບານ ສ.ສ.ເຢຍຣະມັນ ໄດ້ໃຫ້ການຮ່ວມມືກັບລັດຖະບານລາວ.

ການປະຕິບັດງານມາຮອດປີນີ້ ເປັນປີທີ III ແລ້ວ. ເມື່ອພວກເຮົາຫລຽວຄືນຫລັງ ວຽກງານໃນໄລຍະຜ່ານມາ ສຳລັບສະຖານທູດເຢຍຣະມັນ ເຫັນວ່າ ເປັນໂຄງການທີ່ໄດ້ໃຫ້ບົດຮຽນອັນປະເສີດແກ່ພວກເຮົາ. ບໍ່ພຽງແຕ່ເຈົ້າໜ້າທີ່ກ່ຽວຂ້ອງຂອງສະຖານທູດເທົ່ານັ້ນ ທີ່ມີຄວາມສົນໃຈກ່ຽວກັບໂຄງການນີ້ ແມ່ນແຕ່ບຸກຄົນທີ່ມາຢ້ຽມຢາມກໍ່ໄດ້ຮັບຮູ້ ແລະ ມີຄວາມເຫັນໃຈ.

ໜັງສືໃບລານຈຳນວນຫລວງຫລາຍ ເຖິງວ່າຈະໄດ້ຖືກຫລົງລືມ ແລະ ບໍ່ໄດ້ເອົາໃຈໃສ່ປົກປັກຮັກສາ ແຕ່ວ່າຍັງມີຜູ້ນຳໃຊ້ ແລະ ມີຜູ້ເປັນຫ່ວງເປັນໃຍຢູ່. ໂຄງການນີ້ ເມື່ອໄດ້ຮັບການປົກປັກຮັກສາດີແລ້ວ ກໍ່ຍັງຈະໄດ້ນຳໃຊ້ເຕັກນິກທີ່ທັນສະໄໝ ເພື່ອສືບຕໍ່ອາຍຸໜັງສືໃບລານໃຫ້ທຸກຄົນໄດ້ຊົມໃຊ້ຕໍ່ໄປ.

ລັດຖະບານແຫ່ງ ສ.ສ.ເຢຍຣະມັນ ມີຄວາມພາກພູມໃຈທີ່ໄດ້ໃຫ້ການຊ່ວຍເຫລືອ ໂດຍສະເພາະ ເຫັນວ່າປະຊາຊົນລາວມີຄວາມຫ່ວງໃຍຕໍ່ວັດທະນະທຳທີ່ເປັນເອກະລັກຂອງຕົນເອງ.

ໂຄງການນີ້ ບໍ່ພຽງແຕ່ໄດ້ມີການປົກປັກຮັກສາເອກະສານເທົ່ານັ້ນ ແຕ່ວ່າຍັງໄດ້ມີສ່ວນຮ່ວມດ້ານສັງຄົມອື່ນໆ ຢູ່ພື້ນຖານ. ເຫັນໄດ້ວ່າເວລາ ປະຊາຊົນເຂົ້າມາເຕົ້າໂຮມກັນ ເພື່ອສະເຫລີມສະຫລອງການອະບາໄນໃບລານ ໄດ້ຮ່ວມກັບພະສົງ ປະກອບພິທີກຳ ເຊິ່ງເປັນການເຂົ້າຮ່ວມ ທີ່ມີຊີວິດຊີວາດ້ວຍຄວາມພໍອົກພໍໃຈ ເຮັດໃຫ້ເກີດຄວາມສາມັກຄີກັນ ອັນໄດ້ກາຍເປັນສັນຍະລັກແຫ່ງການຟື້ນຟູ, ອະນຸລັກ ແລະ ສົ່ງເສີມມໍລະດົກຂອງຊາດ.

ຂ້າພະເຈົ້າ ຂໍອວຍພອນໃຫ້ແຂວງໄຊຍະບູລີ ຈົ່ງໄດ້ປະສົບຜົນສຳເລັດໃນການປົກປັກຮັກສາເອກະສານນີ້ຕະຫລອດໄປ.

✪ ✪ ✪



*ທ່ານ ອຸລຣິສ ດູ໊ເຊນ ເອກອັກຄະລັດຖະທູດ ແຫ່ງ ສ.ສ.ເຢຍຣະມັນ ປະຈຳລາວ ຢ້ຽມຢາມການສຳຫລວດຂອງໂຄງການ ຢູ່ແຂວງຫລວງພະບາງ.*

# ຄວາມຊົງຈຳ ຈາກອະດີດ

✍ ດຣ. ທອງຄຳ ອ່ອນມະນີສອນ

*( ຄັດຈາກບົດປະກອບຄຳເຫັນທາງວິຊາການ ໃນກອງປະຊຸມສະຫລຸບວຽກງານ ອະນຸລັກໜັງສືໃບລານ 4 ແຂວງພາກໃຕ້ ທີ່ແຂວງສະຫວັນນະເຂດ, ວັນທີ 17-21/4/95)*

ເປັນທີ່ຮັບຊາບນຳກັນແລ້ວວ່າພູມປັນຍາ, ມໍລະດົກວັດທະນະທຳ, ອາລະຍະທຳ, ຄວາມສະຫລາດສະຫລຽວ ທີ່ເປັນຄຸນທາດຂອງຊາດ ຕະຫລອດຮອດຮີດຄອງປະເພນີອັນດີງາມຕ່າງໆ, ທັດສະນະຄະຕິ ວິທີດຳລົງຊີວິດ, ສາສະໜາ, ກົດໝາຍ, ວັນນະຄະດີ, ຄະຕິສຸພາສິດ ແລະ ຈິດຕະວິທະຍາ ນານາວິຊາການ ຍ່ອມມີການສືບທອດຢ່າງ ສືບເນື່ອງຕິດຕໍ່ກັນມາຈາກຍຸກໜຶ່ງສູ່ອະນຸຊົນ ອີກຍຸກໜຶ່ງ. ດັ່ງນັ້ນລັກສະນະສືບທອດ ຈຶ່ງເປັນຄືດັ່ງສາຍໂລຫິດເລືອດເນື້ອກະດູກໜັງ ທີ່ແຍກອອກຈາກກັນບໍ່ໄດ້. ຫາກຂາດ ການສືບທອດ ກໍຈະຂາດພື້ນຖານອັນແໜ້ນແກ່ນ ຂາດບ່ອນອີງທີ່ສຳຄັນ. ແຕ່ຄັນມີແຕ່ສືບທອດມໍລະດົກວັດທະນະທຳ ຊ້ຳພັດຂາດການປະຍຸກ ປະສານສົມທົບໃສ່ຍຸກສະໄໝແລ້ວ ກໍຈະບໍ່ກ້າວໄກ ບໍ່ຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງສັງຄົມ. ດັ່ງ ນັ້ນ ການສືບທອດພູມປັນຍາ ແລະ ວັດທະນະທຳຂອງຊາດຈຶ່ງເປັນສິ່ງສຳຄັນ ແລະ ຈຳເປັນ. ໃນເວລາດຽວກັນ ມັນກໍຮຽກຮ້ອງ ໃຫ້ມີການປົກປັກຮັກສາມໍລະດົກ ວັດທະນະທຳອັນເກົ່າແກ່ລ້ຳຄ່າໄວ້ໃຫ້ໝັ້ນຄົງ ເພື່ອສະສົມຖະໜອມຫອມແຜງໄວ້ ສຳລັບຄົ້ນຄວ້າ ແລະ ເປັນບົດຮຽນໃນອະນາຄົດ. ພ້ອມດຽວກັນ ຫາກມີແຕ່ການປົກປັກຮັກສາຢ່າງດຽວກໍຈະກາຍເປັນຜູ້ປະຕິບັດລັດທິອະນຸລັກນິຍົມ ຫລື ນິຍົມບູຮານ. ສະນັ້ນຈະຕ້ອງດຳເນີນການ ທັງອະນຸລັກປົກປັກຮັກສາ, ພັດທະນາປະລິວັດ ແລະ ຮຽບຮຽງ ວິໄຈ ອະທິບາຍດ້ວຍການພິມອອກເປັນພາສາອັກສອນປັດຈຸບັນ ຫລື ຂຽນໃຫ້ອ່ານເຂົ້າໃຈງ່າຍ ດ້ວຍການໃຊ້ສັບສຳນວນແບບທຳມະດາ: ເພື່ອສົ່ງຍື່ນຄວາມຮູ້ ແລະ ວິຊາການໃຫ້ຄົນຍຸກໃໝ່ໄດ້ສຳຜັດກັບມໍລະດົກທາງປັນຍາ ຂອງບັນພະບຸລຸດດ້ວຍຕົນເອງ.

ລາວເຮົາມີມູນມໍລະດົກ ທາງວັດທະນະທຳ ອັນລ້ຳຄ່າຢ່າງຫລວງຫລາຍ ທີ່ໄດ້ສືບທອດຢ່າງຕໍ່ເນື່ອງມາຈາກບັນພະບຸລຸດ. ຫລັກຖານອັນມູນທີ່ດີເດັ່ນທີ່ສຸດນັ້ນ ແມ່ນລາຍລັກອັກສອນ ຢູ່ໃນໜັງສືຜູກໃບລານຕາມວັດຕ່າງໆໃນທົ່ວປະເທດ. ແຕ່ເນື່ອງຈາກມີການປ່ຽນແປງທາງດ້ານປະຫວັດສາດ ແລະ ຊະຕາກຳຂອງປະເທດຊາດ ໄດ້ສັບສົນລົ້ມລົງຮອນໃນບາງຍຸກບາງສະໄໝ ໜັງສືຜູກໃບລານຈຶ່ງຕົກເຮ່ຍເສຍຫາຍ, ຖືກເຜົາຜານ, ຖືກປຸ້ນຈີ້ລັກເອົາໄປ. ຈຳນວນທີ່ຍັງເຫລືອຄ້າງໃຫ້ໄດ້ຄົ້ນຄວ້າ ແລະ ຮື້ນຊົມນຳກໍຍັງບໍ່ຫລາຍພໍປານໃດ ອີກອັນໜຶ່ງຢູ່ຕາມເຂດທ້ອງຖິ່ນຊົນນະບົດ ຫລື ບ່ອນຫ່າງໄກສອກຫລີກນັ້ນ ການປົກປັກຮັກສາ ຫລື ການນຳໃຊ້ ກໍເປັນໄປຕາມບຸນຕາມກຳ ເຊິ່ງຕົກເປັນພາລະຮັບຜິດຊອບຂອງມະຫາຊົນ ຢ່າງບໍ່ມີລະບົບຈັດແຈງ ຈັດການຕາມຫລັກວິຊາການແຕ່ຢ່າງໃດ. ບາງແຫ່ງກໍໄດ້ມີການຄຸ້ມຄອງດີສົມຄວນ ບາງແຫ່ງກໍບໍ່ມີນັກປາດອາຈານ ຜູ້ຮູ້ເບິ່ງແຍງ. ດັ່ງນັ້ນ ໜັງສືຜູກໃບລານ ອັນເປັນມໍລະດົກທາງປັນຍາອັນລ້ຳຄ່າ ຈຶ່ງຕົກຢູ່ໃນສະພາບໜ້າອິດູສົງສານ ແລະ ນັບມື້ນັບຈະຕົກເຮ່ຍເສຍຫາຍ ສູນສິ້ນສະຫລາຍໄປຢ່າງເປັນໜ້າເສຍດາຍທີ່ສຸດ.

ລັນມາເຖິງສະໄໝ ລະບອບປະຊາທິປະໄຕປະຊາຊົນລາວກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ໄດ້ມີນະໂຍບາຍອັນຖືກຕ້ອງສອດຄ່ອງໃນການຟື້ນຟູ, ອະນຸລັກປົກປັກຮັກສາ ແລະ ສົ່ງເສີມມໍລະດົກວັດທະນະທຳຂອງຊາດ ໄດ້ອະນຸມັດໃຫ້ດຳເນີນ ໂຄງການປົກປັກຮັກສາໜັງສືໃບລານ ໂດຍການອຸປະຖຳຂອງ ລັດຖະບານ ແຫ່ງ ສ.ສ. ເຢຍຣະມັນ. ໂຄງການດັ່ງກ່າວນີ້ ກໍໄດ້ປະຕິບັດໜ້າທີ່ຂອງຕົນຢ່າງ ມີປະສິດທິຜົນສູງ.

ການສຶກສາ ຄົ້ນຄວ້າ ຮຽນຮູ້ ແລະ ເຂົ້າໃຈຄຸນຄ່າພູມປັນຍາວິຊາການ ແລະ ສິ່ງຍອດຍິ່ງຈາກຜົນງານຂອງບັນພະບຸລຸດທີ່ຂຽນສະຫລັກໄວ້ໃນໃບລານແລ້ວຊ່ວຍກັນຟື້ນຟູປົກປັກຮັກສາຖະນຸຖະໜອມ ແລະ ສົ່ງຍື່ນຄວາມຮູ້ໃຫ້ສັງຄົມ ໄດ້ຮັບນຳນັ້ນເປັນສິ່ງທີ່ດີເລີດ ແລະ ເປັນຜົດຕິກຳທີ່ປະເສີດທັງເປັນການກະທຳ ທີ່ໜ້າຍ້ອງຍໍສັນລະເສີນທີ່ສຸດ.

→

→

### (1) ຕົວອັກສອນ ແລະ ໜັງສື ຜູກໃບລານ

ເມື່ອຢ້ອນກ່າວເຖິງຊາດລາວ ຄົນລາວສະໄໝອານາຈັກລ້ານຊ້າງ ແລະ ອ້າງອີງໃສ່ຫລັກ ຖານປະຫວັດສາດ ທາງດ້ານອັກສອນສາດ ແລະ ວັນນະຄະດີ ຂຽນແລ້ວສັງຣອມໄດ້ວ່າ ໃນສະໄໝນັ້ນ ມີອັກສອນ ຫລື ຕົວໜັງສືໃຊ້ຢູ່ 2 ຈະນິດ ຄື : ອັກສອນລາວ ແລະ



✪ *ພັບສາ ວັດທະນະທຳທີ່ຍັງມີຊີວິດຊີວາ ຢູ່ເຂດເມືອງເງິນ ແຂວງໄຊຍະບູລີ*

ອັກສອນທຳ. ຕົວໜັງສື ຫລື ຕົວອັກສອນລາວບູຮານ ນິຍົມໃຊ້ຂຽນບັນທຶກຈາລຶກທາງລາຊະການບ້ານເມືອງທີ່ໃຊ້ໃນການປົກຄອງ ແລະ ພົວພັນສັງຄົມທົ່ວໄປ. ສ່ວນຕົວໜັງສືທຳໃຊ້ໃນທາງສາສະໜາເພື່ອຂຽນຈາລຶກພະທຳຄຳສັ່ງສອນຂອງພຸດທະເຈົ້າ. ໜັງສືທັງ 2 ປະເພດນີ້ ໃຊ້ຂຽນລົງໃນໃບລານ ແລະ ວັດຖຸອື່ນໆ ເຊັ່ນ : ແຜ່ນທອງ, ແຜ່ນເງິນ, ແຜ່ນຄຳ ເປືອກໄມ້, ຕິວໄມ້ໄຜ່ ເຈ້ຍສາ ແລະ ອື່ນໆ.... ພ້ອມກັນນັ້ນກໍໃຊ້ຄູ່ຄຽງກັນມາເປັນເວລາດົນນານ ແລະ ຍັງຄຳລົງ ຄົງຕົວຢູ່ຮອດສະໄໝປັດຈຸບັນ. ແຕ່ໜ້າເສຍດາຍໜັງສືທຳ ທີ່ຖືກນຳໃຊ້ບັນທຶກຄຳພີດີກາວັນນະຄະດີ ແລະ ວິຊາການ ນິທານຕ່າງໆນັ້ນ ພວມຈະສູນເສຍ ແລະ ໝົດຄ່ານິຍົມໄປ. ສ່ວນໜັງສືລາວນັ້ນ ມີການນຳໃຊ້ຢ່າງກວ້າງຂວາງ ແລະ ນັບມື້ຈະພັດທະນາໄປເລື້ອຍໆ. ເຖິງຢ່າງໃດກໍດີ ເຖິງແມ່ນໜັງສືລາວ ຈະມີລັກສະນະເກົ່າແກ່ດັ້ງເດີມກວ່າ ແລະ ໄດ້ຖືກຊົມໃຊ້ຫລາຍກວ່າທັງມີທ່າ ຂະຫຍາຍຕົວຢ່າງຕໍ່ເນື່ອງກໍຕາມ ໜັງສືທຳທີ່ບັນທຶກສືບທຳ ວັດທະນະທຳ ແລະ ສາດຕ່າງໆ ໃນໃບລານນັ້ນຍັງມີຄວາມສຳຄັນທີ່ສຸດເພາະເປັນເອກະສານເກົ່າແກ່ ແລະ ມີຄຸນຄ່າສູງ.

ຕົວໜັງສືທັງ 2 ຊະນິດນີ້ ບໍ່ແມ່ນໄດ້ ແບບມາຈາກໜັງສືໄທ ແບບລານຄຳແຫງ ແຫ່ງສະໄໝສຸໂຂໄທ ທີ່ດັ່ງບາງທ່ານຍັງຢືນແຕ່ປະການໃດ. ແຕ່ກົງກັນຂ້າມຕົວອັກສອນສຸໂຂໄທ ໄດ້ແບບມາຈາກຕົວອັກສອນລາວ ທີ່ມີມາກ່ອນແລ້ວ. ນັກປາດຄົ້ນປະລັ່ງ ເຟີແດ ແລະ ໄອໂມນີເອ ກ່າວໜັງສືລາວບໍ່ແມ່ນໄດ້ແບບມາຈາກໜັງສື ສຸໂຂໄທ. ດັ່ງນັ້ນ ຄວາມເກົ່າແກ່ຂອງວັດທະນະທຳລາວ ທາງດ້ານຕົວອັກສອນ ຈຶ່ງເປັນບັນຫາທ້າທາຍນັກຄົ້ນຄວ້າ ແລະ ຜູ້ມປັນຍາຄົນຍຸກໃໝ່ບໍ່ແມ່ນໜ້ອຍ.

*ອ່ານຕໍ່ສະບັບໜ້າ*



* *ໃບລານເກົ່າແກ່ ອາຍຸ 400 ກວ່າປີ, ວັດສີພູມ, ເມືອງແກ່ນທ້າວ*

# ສັງຮອມ ການ ເຄື່ອນໄຫວ

ບຸນທະວີ ບຸນຊູຣັກ
ຈັນສະມຸດ ທິລະກຸນ

**ບໍ່ແຕນດິນແດນແຫ່ງຕາດຮໍາ,ໝາກມ່ວງຈ້ໍາ, ນໍ້າຜັກກະທອນ**, ເມືອງບໍ່ແຕນ ເປັນເມືອງເຂດໃຕ້ ຂອງໄຊຍະບູລີ ທີ່ມີຊາຍແດນທັງສາມ ດ້ານຕິດກັບປະເທດໄທ. ປະຊາຊົນເຂດນີ້ ເປັນຊົນເຜົ່າລາວລຸ່ມ ອາຊີບເຮັດນາ ເຮັດສວນ ປູກພືດເປັນສິນຄ້າ ແລະ ລ້ຽງສັດ. ຊາວເມືອງບໍ່ແຕນ ລ້ວນແຕ່ມີມູນເຊື້ອດຸໝັ່ນ ແລະ ຊື່ສັດ.

ທໍາມະຊາດໄດ້ປັ້ນແຕ່ງ ໃຫ້ເມືອງນີ້ງົດງາມ ເໝາະສົມແກ່ການທ່ຽວຊົມ ໃນນີ້ມີນໍ້າຕົກຕາດຫລາຍໆແຫ່ງ ເຊັ່ນ : ຕາດຮໍາ, ແກ້ງທຽນ, ຕາດນໍ້າເຫືອງ, ຕາດສະແນນ... ອັນທີ່ໂດດເດັ່ນ ແລະ ເປັນທີ່ເອກອ້າງ ຂອງເມືອງບໍ່ແຕນ ກໍ່ແມ່ນຫໍໄຕທີ່ເກົ່າແກ່ຕັ້ງຢູ່ກາງສະນໍ້າ ເຊິ່ງບັນຈຸຫີບທໍາ ແລະ ໜັງສືໃບລານຫລາຍພັນຜູກ ຈິດຕະກໍາຝາຜະໜັງ ວັດໂພແທ່ນທີ່ງົດງາມ ແລະ ມີແຫ່ງດຽວໃນໄຊຍະບູລີ.

ກະພໍດີຕາມສັນຍາວ່າ ໜ້າແລ້ງປີນີ້ ໂຄງການ ປົກປັກຮັກສາໜັງສືໃບລານ ຈະທໍາການສໍາຫລວດ ແລະ ປົກປັກຮັກສາຢູ່ເມືອງບໍ່ແຕນ ແກ່ນທ້າວ ແລະ ປາກລາຍ. ກົມເວລາ ແຫ່ງການຄອຍຄອຍ ກໍ່ມາຮອດອີຫລີ ! ວັນທີ 24 ກຸມພາ 1995 ໂຄງການ ໄປຮອດເມືອງບໍ່ແຕນ. ເຖິງແມ່ນການເດີນທາງຈະປະສົບຄວາມຫຍຸ້ງຍາກ ແຕ່ຄະນະໜ່ວຍສໍາຫລວດ ນໍາໂດຍ ທ່ານ ມະຫາບຸນຍົກ ແສນສູນທອນ, ທ່ານ ສຸວັນ ທິລະວົງ, ພ້ອມດ້ວຍ ທ່ານ ບຸນທະວີ ບຸນຊູຣັກ ພະນັກງານ ຈາກພະແນກ ຖະແຫລງຂ່າວ ແລະ ວັດທະນະທໍາແຂວງ ສົມທົບພະນັກງານຈາກເມືອງ ກໍລົງສໍາຫລວດທີ່ວັດໂພແທ່ນ ໂບລານາລາມ ບ້ານບໍ່ແຕນ ກອນໝູ່.



* ຕູ້ໃສ່ໜັງສືໃບລານ ຢູ່ວັດໂພແທ່ນ, ເມືອງບໍ່ແຕນ, ແຂວງໄຊຍະບູລີ.

ວັດໂພແທ່ນ ເປັນວັດດັ້ງເດີມ ແລະ ເຄີຍຮຸ່ງເຮືອງທາງດ້ານພຸດທະສາສະໜາມາເປັນຫລາຍໆສັດຕະວັດ ສະແດງອອກເຊັ່ນ : ມີທາດ, ສິມ, ຮາວທຽນ ແລະ ຫໍໄຕທີ່ເກົ່າແກ່ເຖິງ 200 ກວ່າປີ. ຍ້ອນແນວຄິດທີ່ຫວງແຫນວັດຖຸບູຮານ ຂອງຊາວບ້ານບໍ່ແຕນ ເປັນຫລາຍໆຮ້ອຍໝາກຫົວໃຈ, ເຖິງແມ່ນວ່າຈະໄດ້ຊົມ ວີດີໂອ, ໄດ້ຮັບການອະທິບາຍ ກ່ຽວກັບການປົກປັກຮັກສາໜັງສືໃບລານແລ້ວກໍ່ຕາມ ແຕ່ເຂົາເຈົ້າກໍ່ຍັງບໍ່ເຂົ້າໃຈເຖິງການລົງ ໄປເຮັດວຽກຂອງໜ່ວຍສໍາຫລວດ ຂອງພວກເຮົາ. ພວກເພິ່ນຍັງພາກັນຖາມເປັນສຽງດຽວກັນວ່າ "ເພິ່ນຄະນາໄມແລ້ວ ເພິ່ນຊິເອົາໄປໃສ ? ແລະບັນຫາທີ່ຍັງບໍ່ເຂົ້າໃຈອື່ນໆ ຫລາຍຢ່າງ. ແທນທີ່ພວກເຮົາຈະມີຄວາມທໍ້ຖອຍ ກົງກັນຂ້າມ ພວກເຮົາກັບຮູ້ສຶກວ່າ "ແນວຄິດຮັກ ແລະ ຫວງແຫນແນວນີ້ ລະ ທີ່ເຮັດໃຫ້ມໍລະດົກເຫລົ່ານີ້ຕົກທອດມາຮອດລູກຫລານ" ລູງບຸນຍົກ ແສນສູນທອນ ໄດ້ຈັດຕັ້ງກັນໂອ້ລົມຊາວບ້ານ, ຈຶ່ງເຮັດໃຫ້ຊາວບ້ານເຂົ້າໃຈຂຶ້ນຕື່ມ. ໃນຫໍໄຕທີ່ສ້າງດ້ວຍໄມ້ ຢູ່ກາງໜອງ ບັນຈຸຄໍາພີໃບລານໄວ້ເຖິງ 6 ຕູ້. ພໍ່ຕູ້ຈານກື່ ຊຶ່ງເປັນນັກປາດອາຈານຜູ້ອາວຸໂສ ອາຍຸ 70 ກວ່າປີ

→

→

ແລ້ວ ແຕ່ເພິ່ນບໍ່ໄດ້ລົດລະໃນການເອົາໃຈໃສ່ຮັກສາໜັງສືໃບລານ. ຕອນທ່ານວັດທີ່ເອົາໜັງສືລົງມາເພິ່ນ ກໍ່ເວົ້າວ່າ : ເອົາມາກອງກັນໄວ້ ແລ້ວມັນຊິບໍ່ຂະຊາຍໄປໝົດບໍ່ ...

ເວລາເຖົ້າແກ່ແນວໂຮມເອົາຕູ້ລຳຜີລົງມາສ້ອມແປງນັ້ນ ກໍ່ຍັງມີຄຳເວົ້າຕື່ມວ່າ : ເພິ່ນສິເອົາຕູ້ລຳຜີອັນເກົ່ານີ້ໄປແລ້ວ ເພິ່ນຊິຊື້ຕູ້ໃໝ່ມາແທນໃດທັ້ນ !

* ພາຍຫລັງທີ່ສຳເລັດ ການສຳຫລວດຂຶ້ນບັນຊີເປັນເວລາ 7 ມື້ ມີໜັງສືທີ່ໄດ້ຮັບການປົກປັກຮັກສາ **1969 ຜູກ, 182 ມັດ ໜັງສືສ່ວນຫລາຍ ມີອາຍຸປະມານ 100-200 ກວ່າປີ**. ໃນມື້ສຸດທ້າຍ ກ່ອນຈະອອກຈາກ ບ້ານບໍ່ແຕນນັ້ນ ບັນດາຊາວພຸດທະສາສະນິກະຊົນ ບ້ານບໍ່ແຕນ ທຸກໆຄົນໄດ້ອວຍພອນໃຫ້ໄຊດ້ວຍຝ້າຍຂາວບໍລິສຸດ ປິດທ້າຍດ້ວຍຂັບລຳທ້ອງຖິ່ນ, ສຽງຄ້ອງສຽງກອງດັງກ້ອງໄປທົ່ວບ້ານ ເປັນສັນຍະລັກວ່າ ອັນທີ່ຍັງຈາອຶກອາໃຈນັ້ນ ບາດນີ້ໄດ້ແຈ້ງຈາງປາງແລ້ວ.

* ອອກຈາກບ້ານບໍ່ແຕນ ພວກເຮົາກໍ່ມາເປີດບັ້ນສຳຫລວດ ຢູ່**ເທດສະບານເມືອງບໍ່ແຕນ ຄື : ວັດໂນນສະຫວ່າງ ໂພທິໄຊຍາລາມ ບ້ານເມືອງຮ້າ ຈາກນັ້ນກໍ່ມາທີ່ວັດໂພທິສົມພານ ບ້ານນາກອກ ວັດສີບຸນເຮືອງ ບ້ານຕາລີ້ງ**. ຊຶ່ງເປັນບ້ານເກົ່າແກ່ 200 ກວ່າປີມາແລ້ວ ແລະ ມີລ້າຍທິດ ລ້າຍຈານຫລາຍຄົນ ໃນ 3 ວັດນີ້ ໃຊ້ເວລາບໍ່ຮອດໜຶ່ງອາທິດ ພວກເຮົາກໍ່ສາມາດຂຶ້ນບັນຊີໜັງສືໃບລານ ໄດ້ເຖິງ 2000 ກວ່າຜູກ, ແລະ ໃນນີ້ ມີໜັງສືສຳຄັນ



* ຫໍໄຕ ຕັ້ງຢູ່ກາງໜອງ, ວັດໂພແທ່ນ, ເມືອງບໍ່ແຕນ, ໄຊຍະບູລີ.

ເຊັ່ນ : **ມູນກະຈາຍ, ກາລະເກດ, ທັມະ ແລະ ວັນນະ ຄະດີອື່ນໆ**.

*ຈາກນັ້ນ ໄດ້ເຄື່ອນຍ້າຍໄປທາງທິດໃຕ້ ເພິ່ນເອີ້ນວ່າ "**ເຂດນາບໍ່ນ້ອຍ ຫລື ເຂດຫ້ວຍສີ່ແງ່**" ຊຶ່ງເຄີຍເປັນດິນແດນວິລະຊົນທີ່ລືນາມ ມາແລ້ວ.

* **ວັດໂພສີ ບ້ານເມືອງແພ່** ເປັນວັດທີ່ເຄີຍມີພະອາຈານຫລັກຄຳ ເປັນຜູ້ນຳພາອອກຕົບ ບາດໂຍມ ເຫລື້ອມໃສໃນພຸດທະສາສະໜານາດົນນານ ແຕ່ປັດຈຸບັນກາຍເປັນວັດຮ້າງ. ບ້ານເໝືອງແພ່ເປັນ ບ້ານນ້ອຍໆ ທີ່ມີ 50 ກວ່າຫລັງເຮືອນ ຕັ້ງຢູ່ແຄມນ້ຳເຫືອງ ຊຶ່ງເປັນຊາຍແດນອັນລະຫວ່າງລາວ-ໄທ. ເຖິງວ່າເສັ້ນທາງຄົມນາຄົມຫຍຸ້ງຍາກ, ເສດຖະກິດຕ້ອງໄດ້ເພິ່ງຜູ້ອື່ນ ແຕ່ເອົາເຈົ້າບໍ່ປະຖິ້ມນ້ຳໃຈຫວງແຫນວັດທະນະທຳຂອງຕົນ. ພໍ່ເຖົ້າແມ່ໂຮມບ້ານ ໄດ້ນຳພາຄະນະພວກເຮົາເຂົ້າໄປໃນສິມ ເພື່ອໄຫວ້ພະແລ້ວ ເພິ່ນກໍບອກໃຫ້ຫລຽວໄປທາງແຈສິມ ທຸກສາຍຕາກໍພົບກັບຫີບ 4 ໜ່ວຍ ຕັ້ງລຽນກັນ ປົກຄຸມໄປດ້ວຍຂີ້ຝຸ່ນ ແລະ ເສດງົວຈາກໜອນ ແລະ ເຊື້ອຂາດ. ເປີດເບິ່ງຕູ້ແຕ່ລະໜ່ວຍ ກໍພົບວ່າ ມີໜັງສືເຕັມຕູ້ ສະແດງວ່າປະຊາຊົນເອົາເຈົ້າຍັງເກັບຮັກສາໄວ້ ເຖິງວ່າຈະບໍ່ມີພະສົງຢູ່ກໍຕາມ.

# ຂ່າວໃບລານ

ແຕ່ວັນທີ 15-17 ມີນາ 1995 ພວກເຮົາໄດ້ທຳການປົກປັກຮັກສາ ໃບລານ ໂດຍມີຊາວບ້ານຮ່ວມກັບປະຊາຊົນບ້ານເໜືອງແພ່ ມາຊ່ວຍອະນາໄມ ວັດຖຸ ແລະ ຄຸປະຖຳລ້ຳຊຸກາບຢູ່ການ ກົບມີໜັງສືໃບລານ ທີ່ໄດ້ປົກປັກຮັກສາ 1.000 ຜູກ.



* ທ່ານ ບົວບານ ວໍລະຂຸນ ຮອງລັດຖະມົນຕີ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ເຂົ້າຮ່ວມໃນພິທີຄາລະວະທຳ ທີ່ວັດສີພູມ ເມືອງແກ່ນທ້າວ ແຂວງໄຊຍະບູລີ

* ຫລັງຈາກສຳເລັດຢູ່ບ້ານເໜືອງແພ່ ຄະນະສຳຫລວດກໍໄດ້ເຄື່ອນຍ້າຍມາທີ່**ວັດໂພໄຊສະຫວ່າງ ບ້ານນາກາວ** ວັດນີ້ ເປັນວັດໜຶ່ງທີ່ເກົ່າແກ່ມີຫໍໄຕ, ກຸດີ, ສິມ, ຕ້າຍວັດທີ່ສະແດງໃຫ້ເຫັນວ່າມີອາຍຸສັງຂານລ່ວງມາ 2 ສັດຕະວັດກວ່າແລ້ວ. ການສຳຫລວດໄດ້ຮັບການຮ່ວມມືຈາກນາຍບ້ານ, ແນວໂຮມ ແລະ ພໍ່ແມ່ປະຊາຊົນ ໜ້າເສຍດາຍ ແຕ່ວ່າໜັງສືໃບລານ ສ່ວນຫລວງຫລາຍ ຜຸໂດກຍ້ອນຖືກນ້ຳຝົນ ແລະ ປວກກັດ. ໃຊ້ເວລາພຽງສອງວັນ ການສຳຫລວດກໍ່ສຳເລັດຜົນ. ເຖົ້າແກ່ແນວໂຮມບ້ານນາກາວ ໃຫຍ່ໆກໍ່ເວົ້າເປັນສຽງດຽວກັນວ່າ "ປີນີ້ຟ້າຝົນຊິດີຫລາຍ ເພາະວ່າທາງໂຄງການປົກປັກຮັກສາໜັງສືໃບລານເອົາຝົນມານຳ" ໄປຮອດບ້ານນາກາວປີບ ຝົນກໍ່ຫັ່ງເຫລົ່ງມາຢ່າງແຮງ ພາຍຫລັງສຳເລັດຢູ່ນາກາວ ອີງໃສ່ຄຳຮ້ອງຂໍຂອງເຖົ້າແກ່ແນວໂຮມບ້ານບໍ່ທາງນາ ທາງຄະນະຂອງພວກເຮົາ ຈຶ່ງກັບຄືນໄປສຳຫລວດໜັງສືໃບລານ**ບ້ານບໍ່ທາງນາ** ເຊິ່ງຕັ້ງຢູ່ລະຫວ່າງກາງບ້ານນາກາວ ກັບບ້ານເໜືອງແພ່ ວັນທີ 22 ມີນາ ຄະນະຂອງພວກເຮົາກໍ່ອຳລາໄປທີ່ບ້ານບໍ່ສ້ານ ຍ້ອນຝົນຕົກໜັກ ໃນຫລາຍມື້ກ່ອນ ເຮັດໃຫ້ເສັ້ນທາງທີ່ເປ່ເພຢູ່ແລ້ວ ຖືກນ້ຳເຊາະເຈື່ອນໄປ, ຈຶ່ງເຮັດໃຫ້ການເດີນທາງປະສົບກັບຄວາມຫຍຸ້ງຍາກ ແຕ່ພວກເຮົາກໍ່ເດີນທາງໄປເຖິງບ້ານບໍ່ສ້ານ ດ້ວຍຄວາມປອດໄພ. **ວັດໂພໄຊມະຫາມຸງຄຸນ** ເປັນວັດສຸດທ້າຍທີ່ພວກເຮົາສຳຫລວດຢູ່ເມືອງບໍ່ແຕນ ປະຊາຊົນຢູ່ບ້ານນີ້ ມີສຳນຽງສຽງເວົ້າແຕກຕ່າງກັບບ້ານອື່ນໆ, ຕາມການບອກເລົ່າຂອງຜູ້ເຖົ້າຜູ້ແກ່ຊາວບ້ານບໍ່ສ້ານ ມີເຊື້ອສາຍມາແຕ່ຊຽງຂວາງ ແລະ ແຕ່ກ່ອນ ເຄີຍມີບໍ່ເກືອຢູ່ຢ່າງຫລວງຫລາຍ ປະຊາຊົນບາງຄອບຄົວຍຶດຖື ເປັນອາຊີບ ມາຮອດປັດຈຸບັນບ້ານບໍ່ສ້ານ ຍັງເຄີຍມີວັດຖຸບູຮານອັນລ້ຳຄ່າຫລາຍຢ່າງ ແຕ່ຖືກພວກລັກບໍ່ຄືນມາລັກເອົາໄປ. ໜັງສືໃບລານ ແຕ່ກ່ອນມີເຖິງ 4-5 ຕູ້ ກໍ່ຖືກຈູດເຜົາແດ່, ໜູກັດປວກກິນ ເປັນຈຳນວນຫລວງຫລາຍ. ທີ່ຍັງເຫລືອກໍ່ຊະຊາຍ ເມື່ອສຳຫລວດຂຶ້ນບັນຊີແລ້ວ ຈຶ່ງພົບວ່າຍັງເຫລືອພຽງ 200 ກວ່າຜູກ. **"ຖ້າຫາກປະໄວ້ດົນກວ່ານີ້ ໂດຍບໍ່ລ້ຳບໍ່ແຍງ ມີຫວັງເຫລືອແຕ່ຕູ້ເປົ່າ !"**

ເປັນເວລາ 1 ເດືອນ ທີ່ໄດ້ດຳເນີນການສຳຫລວດຢູ່ເຂດເມືອງບໍ່ແຕນ, ສຳຫລວດໃນ 9 ວັດ ມີໜັງສື →



* ເອົາໃບລານ ລົງຈາກຫໍໄຕ

→ ໃບລານທີ່ຂຶ້ນທະບຽນ 8461 ຜູກ ລວມມີ 498 ມັດ .

**"ເມືອງແກ່ນທ້າວ, ສາວງາມ, ບານເລື່ອງລື"**

ພາຍຫລັງກອງປະຊຸມສຳມະນາ ເຊິ່ງການປະຕິບັດວຽກງານປົກປັກຮັກສາໜັງສືໃບລານລາວໄດ້ປິດລົງ ທາງໜ່ວຍສຳຫລວດ ກໍ່ໄດ້ກັບຄືນສູ່ວຽກງານ ໂດຍສືບຕໍ່ຢູ່**ເມືອງແກ່ນທ້າວ** ເຊິ່ງຕັ້ງຢູ່ທາງໃຕ້ຂອງແຂວງໄຊຍະບູລີຕິດກັບເມືອງບໍ່ແຕນ. ເທດສະບານເມືອງຕັ້ງລຽບຕາມຝັ່ງແມ່ນ້ຳເຫືອງ ມີຊາຍແດນຕິດກັບລາຊະອານາຈັກໄທ ປະຊາຊົນມີຄວາມເຫລື້ອມໃສສັດທາທາງພຸດທະສາສະໜາ, ເປັນຄົນຂະຫຍັນທ້າວທັນ, ເຖິງວ່າໜັງສືໃບລານຈະຖືກສູນເສຍໄປຈຳນວນຫລາຍ ແຕ່ພື້ນຖານວັດທະນະທຳຍັງເຫລືອໄວ້ໃຫ້ລູກຫລານ ເຊັ່ນ : ລຳຕັບເຕົ່າ, ຕີກອງກິ່ງ..., ມີຮອງຮອຍທາງປະຫວັດສາດ ທີ່ເຫັນກັນວ່າ ເມືອງປັບຈະ ຍັງຫລົງເຫລືອຢູ່ວັດປາກເຫືອງ ພ້ອມນັ້ນ ຍັງມີພະພຸດທະຮູບຊຽງຍືນອົງສັກສິດປະດິດສະຖານ ຢູ່ວັດບ້ານເມືອງໝໍ.

ການເປີດບັ້ນສຳຫລວດ ເລີ່ມຕົ້ນຢູ່ວັດສີພູມ ເຊິ່ງເປັນວັດກົກວັດເຄົ້າຂອງຊາວເມືອງ ເປັນສູນລວມນ້ຳໃຈຂອງ 3 ບ້ານ ຄື : **ບ້ານໂຮງເທິງ, ບ້ານທ້າວແກ່ນ ແລະ ບ້ານສີພູມ**. ບັນຍາກາດໃນການເປີດບັ້ນສຳຫລວດຢູ່ສາລາໂຮງທຳຄຶກຄື້ນເປັນພິເສດ ເພາະ**ທ່ານບົວບານ ວໍລະຂຸນ** ຮອງລັດຖະມົນຕີ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳໄດ້ມາຮ່ວມ ແລະ ຢ້ຽມຢາມຖາມຂ່າວພໍ່ແມ່ພີ່ນ້ອງ ທາງເມືອງແກ່ນທ້າວ, ບໍ່ແຕນ, ປາກລາຍ, ນອກນັ້ນ ຍັງມີ**ທ່ານ ສາສະດາຈານ ດຣ. ຣາຣັນ ຣຸນດິອຸສ**, ຊ່ຽວຊານປະຈຳໂຄງການ, **ນາງ ດາວາ ກັນລະຍາ** ຫົວໜ້າໂຄງການ, ທ່ານ **ທອງສຸກ ໄຊຍະລາດ** ຫົວໜ້າພະແນກຖະແຫລງຂ່າວ ແລະ ວັດທະນະທຳ, ພ້ອມດ້ວຍພະນັກງານຄອມຂ້າງເມືອງເຂົ້າຮ່ວມເຕັມທໍແຈກ.

* ພໍແຕ່ນຳເອົາໜັງສືໃບລານລົງມາເຊັດຖູພວກເຮົາກໍພົບກັບເອກະສານທີ່ເກົ່າແກ່ ມີຄຸນຄ່າຫລາຍສະບັບ ຈົນທ່ານສາສະດາຈານ ຣາຣັນ ຣຸນດິອຸສ ກ່າວວ່າ: "**ຊ້າງເຜືອກມັກຈະຢູ່ໃນປ່າ**" ຢ່າປະມາດວ່າໜັງສືເພິ່ນມີໜ້ອຍແລ້ວຈະບໍ່ມີເລື່ອງທີ່ມີຄຸນຄ່າ. ເພາະໃນກອງໃບລານທີ່ຊະຊາຍ ພົບເຫັນໜັງສື "ກົງຂາວິຕຖາຣະນີ" ອາຍຸ 400 ກວ່າປີ ເປັນພາສາບາລີ ລ້ວນ 1 ຜູກ, "ສັນໂນທະວິໂນທະນີ", ເປັນພາສາບາລີ, "ກະຖາວັຕຖຸ" ເປັນ ພາສາບາລີ, ແລະ ໜັງສືດີກາສມັນຕະປາສາທິກາ". ລ້ວນແຕ່ເປັນໜັງສື ທີ່ມີຄຸນຄ່າ.

* ຈາກນັ້ນ ໜ່ວຍສຳຫລວດກໍ່ຍ້າຍມາທີ່**ວັດຈອມແຈ້ງ**, ບ້ານຈອມແຈ້ງ ຢູ່ໃນເທສະບານເມືອງເຊັ່ນກັນ ໜັງສືສ່ວນຫລາຍຊະຊາຍ ແຕ່ໃນນັ້ນພົບໜັງສືໃບລານ 1 ໃບ ແຕ້ມຮູບໃສ່ດ້ວຍລວດລາຍທີ່ງົດງາມ ຂ້າພະເຈົ້າເອງບໍ່ເຄີຍເຫັນມາກ່ອນ ຈາກນັ້ນ ໜ່ວຍສຳຫລວດ ກໍ່ເຄື່ອນຍ້າຍຈາກເທສະບານອອກໄປທີ່ບ້ານວັດໜອງ, ສ່ວນຫົວໜ້າໂຄງການ, ຊ່ຽວຊານປະຈຳໂຄງການ ໄດ້ເດີນທາງຕໍ່ໄປ ເພື່ອຢ້ຽມຢາມວຽກງານທີ່ສຳເລັດແລ້ວ ຢູ່ເມືອງບໍ່ແຕນ.

ຢູ່ທີ່ເມືອງແກ່ນທ້າວ ໜ່ວຍສຳຫລວດໃຊ້ເວລາ 16 ວັນ, ສຳຫລວດໃນ 4 ວັດ ພົບໜັງສືໃບລານ 2011 ຜູກ ລວມມີ 115 ມັດ.

✪ ✪ ✪

ຄະນະຈັດທຳ

ຫົວໜ້າບັນນາທິການ: ດາຣາ ກັລຍາ

ຜູ້ຊ່ວຍບັນນາທິການ : ຈັນສະມຸດ ທິລະກຸນ

ຈັດໜ້າຄອມພິວເຕີ : ວຽງຄຳ ບັນທະວົງດວງສີ

ມາລີ ທອງທຸມມາ

ຖ່າຍພາບ

- ດາຣາວັນ ລາດຊະວົງ
- ຈັນສະໜອນ ສິນພານວິຈິດ
- ຍີ່ ຈັນທະວົງ

ເຈົ້າຂອງ

ໂຄງການປົກປັກຮັກສາໜັງສືໃບລານລາວ

ສຳນັກງານ

ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

ຕູ້ ປ.ນ. 6244 ໂທລະສັບ 213029

* ຈັດພິມ ສຳລັບແຈກຢາຍ